ພະຍາກອນ ວຽງຈັນ
22–31°C
ວັນສຸກ 13/11 · ແจ่มใส

ມะหาสาม

ลายอัน ◆ MAHAXAN DAILY ◆ mahaxan.com

โฆสะบา
พื้นที่โฆสะบา
44 × 25 มม · ติดต่อ WhatsApp 020 5888 6182

ວันสุก 13 พะจิก 2026 · สะบับที 021 | สะทูบข่าวปะจำอันพะหัด 12 พะจิก 2026 · 24 ข่าว | 21 หน้า · อ่านฟรี · สิ่งต่ำใช้หมุ่ได้

◆ **เหตการ** · 10:05 โมง · อ่าน 43 ถั้ง

เกิดเหตทะเลาะอิอาดกางเดิก ยู่เขดก่ำส้างบ้ามปากห้าง บาดเจับ 7 ถืม!



ทางดึกอันที 11 พะจิก 2026 เอลา 23:53 โมง, หม่อยกู้ไพมุนนิทีช่อยเหลือถืมทุกยากแต่ง สปป ลาอ (สายด่อม 1623 จุดนา เล่า) ได้ธับแจ้งเหตทะเลาะอิอาด ยู่บ้ลิเอมเขด ก่ำส้าง บ้ามปากห้าง.

เมื่อเจ้าหน้าที่กู้ไพลิงกอดสอบ พิบ ผู้บาดเจับทั้งหมิด 7 ถืม (เป้มเผดชายทั้งหมิด, มิทั้งถืมลาอ 5 ถืม และ ชาอจิม 2 ถืม) โดยมิอาทามบาดเจับตั้งแต่หิอแตา, ถังหัา จิมเถิงแขม หัา.

ต่หน้า 2

◆ **ข่าอต่างปะเทด** · 15:20 โมง

ลอดปาติหาม! เด้กน้อยอายุพรุง 11 เดือม ถืกฝังทั้ง เป้ม ถืมเถิง 24 ซั่วโมง ก่อมเจ้าหน้าที่เข้าช่อยเหลือได้ทัม ขะมะผู้เป้มพ่ำถืกตั้งข้หาพะยายามฆาดตะกำ!



เกิดเหตสะเหิอมขอัมยู่ลัดเซ้าแถโธไลมา สะหะลัดอาเมลิกา เมื่อเด้กชายอายุได้ 11 เดือม ถืกผู้เป้มพ่ำนำใส่ก่อง และ ฝังไอ้ใต้ดิม เป้มเอลาปะมาม 24 ซั่วโมง ก่อมที่เจ้าหน้าที่จะถ็มพิบ และ ช่อยชิอิด ออกมาได้ทันเอลา.

ตามลายงามของตำหุอดเขดเลิกซิงตัม เถ้าติ (Lexington County) ละบุอ่า เด้กชายชื่ โถอา ซาธบ์ (Koah Sharpe) หายติอไปตั้งแต่อันจัน หุ้งจากถืกพ่ำ

ต่หน้า 2

ในสะบับนี้

2 เหตการ
2 ข่าอพายใม
7 เสดถะกิด-สังคิม
9 ข่าอต่างปะเหด
14 Uncategorized
18 มะหาสาม มื้นี้: น้ำมัม, เงิม, ถำ, หาอย, อากาด
19 แจ้งการ
21 ท้ายสะบับ



◆ **แจ้งการ** · 09:46 โมง
แจ้งการมอดไฟ อับที 12,13,14,15/11/2026 ข๋งเขดเมืองๆ จัมทะ...
อ่านหน้า 19 ▸



◆ **แจ้งการ** · 09:18 โมง
แจ้งปับลางลาถา น้ำมัมเอื้อไฟทุกฉะนิด เล่ิม 6 โมง...
อ่านหน้า 19 ▸



◆ **ข่าอต่างปะเหด** · 13:59 โมง
จากเธือโดยสามละถับตำนาม สู่บ้ามใหม่ใต้มะหาสะหมุ...
อ่านหน้า 9 ▸

โฆสะบา
ใช้แบธนของท่าน ยู่หน้า 1 ทุกเช้า
โฆสะบาใน มะหาสาม ลายอัน — หนังสือพิม PDF ที่ถืมลาอดาอโหลด และ ธับทางอิเมอ ทุกเช้า
WhatsApp 020 5888 6182

ເກີດເຫດຫະເລາະວິວາດກາງເດິກ ຢູ່ເຂດກໍ່ສ້າງບ້ານປາກທ້າງ ບ... (ຕໍ່ຈາກໜ້າ 1)

ເພດຊາຍ ອາຍຸ 24ປີ ບ້ານ.ປາກທ້າງ ອາການບາດເຈັບເບື້ອງຕົ້ນມີບາດຢູ່ແຂນຊ້າຍ.

ເພດຊາຍ ອາຍຸ 22ປີ ບ້ານ.ປາກທ້າງ ອາການບາດເຈັບເບື້ອງຕົ້ນແຂນຊ້າຍຫັກ.

ເພດຊາຍ ອາຍຸ 18ປີ ບ້ານ.ປາກທ້າງ ອາການບາດເຈັບເບື້ອງຕົ້ນແຂນຂວາຫັກຫົວແຕກ.

ເພດຊາຍ ອາຍຸ 25ປີ ບ້ານ.ປາກທ້າງ ອາການບາດເຈັບເບື້ອງຕົ້ນມີບາດຕາມຕົນໂຕຫົວແຕກ.

ເພດຊາຍ ອາຍຸ 27ປີ ບ້ານ.ປາກທ້າງ ອາການບາດເຈັບເບື້ອງຕົ້ນຫົວແຕກ.

ເພດຊາຍ ອາຍຸ 32ປີ ບ້ານ.ປາກທ້າງ ສັນຊາດຈີນ ອາການບາດເຈັບເບື້ອງຕົ້ນຫົວແຕກ.

ເພດຊາຍ ອາຍຸ 48ປີ ບ້ານ.ປາກທ້າງ ສັນຊາດຈີນ ອາການບາດເຈັບເບື້ອງຕົ້ນດັ່ງຫັກ.

ທາງໜ່ວຍກູ້ໄພໄດ້ປະຖົມພະຍາບານເບື້ອງຕົ້ນ ແລະ ຮີບນຳສົ່ງຜູ້ບາດເຈັບທັງໝົດໄປປິ່ນປົວຕໍ່ທີ່ໂຮງໝໍ 150 ຕຽງ.

ຂອບໃຈຂໍ້ມູນ ແລະ ພາບຈາກ: ໜ່ວຍກູ້ໄພມູນນິທິ 1623 ຈຸດນາເລົ່າ

#ຂ່າວດ່ວນ #ທະເລາະວິວາດ #ບ້ານປາກທ້າງ #ກູ້ໄພ1623 #ຂ່າວວຽງຈັນ #ອຸບັດຕິເຫດແລະເຫດດ່ວນ

ລອດປາຕິຫານ! ເດັກນ້ອຍອາຍຸພຽງ 11 ເດືອນ ຖືກຝັງທັງເປັນ ... (ຕໍ່ຈາກໜ້າ 1)

ຂອງຕົນ ທ້າວ ໄມເຄິລ ໂຄເມີ (Michael Comer) ອາຍຸ 25 ປີ ພາອອກຈາກເຮືອນແມ່. ຕໍ່ມາ ຜູ້ເປັນພໍ່ຖືກຈັບໃນຂໍ້ຫາບຸກລຸກ ແຕ່ບໍ່ພົບເດັກຢູ່ນຳ ເຮັດໃຫ້ຕຳຫຼວດຕ້ອງລະດົມກຳລັງຄົ້ນຫາຢ່າງຮີບດ່ວນ.

ການຄົ້ນຫາມີຕຳຫຼວດ ແລະ ເຈົ້າໜ້າທີ່ດັບເພີງປະມານ 100 ຄົນ ເຂົ້າຮ່ວມ. ຈົນກະທັ່ງທີມກູ້ໄພພົບຮ່ອງຮອຍດິນທີ່ຖືກຂຸດໃໝ່ໃນປ່າໃກ້ເຮືອນຂອງຜູ້ເປັນພໍ່ ເມື່ອຂຸດລົງໄປກໍໄດ້ຍິນສຽງເດັກຮ້ອງໄຫ້ ກ່ອນຈະພົບວ່າເດັກຍັງມີຊີວິດຢູ່.

ທ້າວ ເຈ ຄູນ (Jay Koon) ຕຳຫຼວດເຂດເລັກຊິງຕັນ ເຄົ້າຕີ ເປີດເຜີຍວ່າ ກ່ອງທີ່ໃຊ້ບັນຈຸເດັກເປັນກ່ອງສຳລັບໃສ່ໝາ ແລະ ຖືກຫໍ່ດ້ວຍຜ້າຂົນໜູ ເຊິ່ງອາດເປັນປັດໃຈທີ່ຊ່ວຍໃຫ້ເດັກຍັງມີອາກາດຫາຍໃຈໄດ້. ຂະນະທີ່ສະພາບອາກາດໜາວເຢັນກໍອາດຊ່ວຍຫຼຸດຄວາມຮ້ອນພາຍໃນກ່ອງ.

ປັດຈຸບັນ ເດັກຊາຍກຳລັງຮັບການຮັກສາຢູ່ໂຮງໝໍ ໂດຍເຈົ້າໜ້າທີ່ຫວັງວ່າຈະຟື້ນຕົວໄດ້ຢ່າງສົມບູນ. ສ່ວນຜູ້ເປັນພໍ່ ມີປະຫວັດເຄີຍຮັບສາລະພາບຜິດໃນຄະດີຄວາມຮຸນແຮງພາຍໃນຄອບຄົວ ຕາມບັນທຶກຂອງສານ.

ຂະນະດຽວກັນ ນາງ ແພັດທຣິເຊຍ ໂຄເມີ (Patricia Comer) ແມ່ຂອງຜູ້ຖືກກ່າວຫາ ໃຫ້ສຳພາດກັບ NBC News ວ່າ ຕົນບໍ່ເຄີຍຄາດຄິດວ່າລູກຊາຍຈະກໍ່ເຫດຮ້າຍແຮງແບບນີ້ ໂດຍລະບຸວ່າ ກ່ອນໜ້ານີ້ລູກຊາຍເຄີຍຊ່ວຍດູແລຫຼານຕາມລຳພັງ ແລະ ບໍ່ເຄີຍມີບັນຫາໃດໆ.

ທັງນີ້ ຕຳຫຼວດຍັງຢູ່ໃນຂັ້ນຕອນພິຈາລະນາຂໍ້ຫາເພີ່ມເຕີມຕໍ່ຜູ້ເປັນພໍ່.

ນາງ ແພັດທຣິເຊຍ ໂຄເມີ (Patricia Comer) ຜູ້ເປັນແມ່ຂອງທ້າວ ໄມເຄິລ ໂຄເມີ ຜູ້ຖືກກ່າວຫາໃນຄະດີນຳລູກນ້ອຍອາຍຸ 11 ເດືອນໄປຝັງທັງເປັນ ໄດ້ໃຫ້ສຳພາດກັບສຳນັກຂ່າວວ່າ ຕົນຮູ້ສຶກຄາດບໍ່ເຖິງວ່າລູກຊາຍຈະກໍ່ເຫດຮ້າຍແຮງເຊັ່ນນີ້.

ທີ່ມາ: AP

ຂ່າວພາຍໃນ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 16:41 ໂມງ · ອ່ານ 14 ຄັ້ງ

ກຽມຈັດລະບຽບການຈອດລົດໃໝ່! ສະພາປະຊາຊົນ ນວ ຮັບຮອງເອົາຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາສະຖານທີ່ຈອດລົດໃນຕົວເມືອງ ນວ



ໃນອາລະດຳເນີນກອງປະຊຸມ ສະໄໝສາມັນ ເທື່ອທີ 2 ຂອງສະພາ ປະຊາຊົນ ນະຄອນ ຫລວງວຽງຈັນ (ນວ) ຊຸດທີ V ໃນວັນທີ12 ພະຈິກ 2026 ນີ້, ທ່ານ ບຸນຍະວັດ ນິຣະໄຊຍ໌ ຫົວໜ້າ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫລວງວຽງຈັນ ໄດ້ຂຶ້ນສະເໜີຮ່າງ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ການ ພັດທະນາສະຖານທີ່ຈອດລົດ ໃນຕົວເມືອງ ນວ.

ຫລັງຈາກນັ້ນ ບັນດາສະມາຊິກ ສະພາປະຊາຊົນ ນວ ໄດ້ສຸມໃສ່ປະກອບ ຄຳເຫັນໃສ່ຮ່າງຂໍ້ຕົກລົງດັ່ງກ່າວ ຊຶ່ງໂດຍ ລວມແລ້ວແມ່ນເຫັນດີເປັນເອກະພາບ ຕໍ່ ໂຄງສ້າງ ແລະ ເນື້ອໃນ, ແຕ່ຍັງມີ ສະມາຊິກສະພາປະຊາຊົນ ນວ ບາງເຂດ ເລືອກຕັ້ງ ສະເໜີໃຫ້ປັບປຸງບາງເນື້ອໃນຢູ່ ບາງໝວດ, ບາງມາດຕາ. ຫລັງຈາກນັ້ນ, ກໍ ໄດ້ພ້ອມກັນລົງຄະແນນສຽງ ຮັບຮອງເອົາ ຂໍ້ຕົກລົງສະບັບດັ່ງກ່າວ ດ້ວຍຄະແນນສຽງ ເຫັນດີເປັນສ່ວນຫລາຍ.

ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ການພັດທະນາສະຖານທີ່ຈອດລົດ ໃນຕົວເມືອງ ນວ ປະ ກອບມີ 11 ໝວດ 45 ມາດຕາ ໂດຍໄດ້ກຳນົດຫລັກການ, ລະບຽບການ, ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການພັດທະນາ ແລະ ການ ບໍລິການສະຖານທີ່ຈອດລົດ ແບບລວມ ສູນ ແລະ ທັນສະໄໝ ໃນນະຄອນຫລວງ ວຽງຈັນ. ຂໍ້ຕົກລົງສະບັບນີ້, ສ້າງຂຶ້ນແນ ໃສ່ແກ້ໄຂບັນຫາການຈອດລົດ ບໍ່ຖືກ ລະບຽບ, ຫລຸດຜ່ອນຄວາມແອອັດ ແລະ ອຸບັດເຫດຕາມທ້ອງຖະໜົນ, ສົ່ງເສີມການ ມີສ່ວນຮ່ວມ ຂອງສັງຄົມ ໃນການ ພັດທະນາພື້ນຖານໂຄງລ່າງສະຖານທີ່ຈອດ ລົດ ສ້າງເປັນແຫລ່ງລາຍຮັບ ມອບເຂົ້າງົບ ປະມານແຫ່ງລັດ ເພື່ອໃຊ້ເຂົ້າໃນການ ບຳລຸງຮັກສາລະບົບຂົນສົ່ງສາທາລະນະ, ການບໍລິການລົດເມດ່ວນ, ການປະດັບ ປະດາ, ອານາໄມ ແລະ ການບໍລິການຕົວ ເມືອງ ເພື່ອປະກອບສ່ວນຊຸກຍູ້ການ ພັດທະນາເສດຖະ ກິດ-ສັງຄົມ ຂອງ ນະຄອນຫລວງວຽງຈັນ ໃຫ້ຂະຫຍາຍ ຕົວຢ່າງຕໍ່ເນື່ອງ.

ການຄຸ້ມຄອງສະຖານທີ່ຈອດລົດ ແມ່ນການຄຸ້ມຄອງບໍລິຫານຢ່າງເປັນລະບົບ ຕໍ່ກັບສະຖານ ທີ່ຈອດລົດ ເພື່ອຮັບປະກັນ ໃຫ້ແກ່ການບໍລິການ, ບໍລິຫານ ແລະ ນຳ ໃຊ້ ສະຖານທີ່ຈອດລົດ ໃຫ້ເປັນໄປຕາມ ລະບຽບ ແລະ ມາດຕະຖານເຕັກນິກທີ່ ກຳນົດໄວ້ ແລະ ສອດຄ່ອງກັບແຜນຜັງ ພັດທະນາພື້ນ ຖານໂຄງລ່າງຕົວເມືອງ. ໃນ ຂະນະທີ່ ການພັດທະນາສະຖານທີ່ຈອດ ລົດ ແມ່ນການປັບປຸງ, ຂະຫຍາຍ, ຍົກ ລະດັບມາດຕະຖານເຕັກນິກ, ພັດທະນາ ໂຄງລ້າງພື້ນຖານ ແລະ ການບໍລິການ ສະຖານທີ່ຈອດລົດ ໂດຍການນຳໃຊ້ເຕັກ ໂນໂລຊີ ທີ່ທັນສະໄໝ ເພື່ອເພີ່ມ ປະສິດທິພາບໃນການບໍລິການ.

ຂ່າວ: ທະນູທອງ

ພາບ: ອາລະສານ ນວ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

ຂ່າວພາຍໃນ · 11:00 ໂມງ · ອ່ານ 14 ຄັ້ງ

ເຈົ້າໜ້າທີ່ບຸກຄົ້ນ 3 ຈຸດ ໃນນະຄອນຫຼວງວຽງຈັນ ກັກຕົວຜູ້ຖືກຫາກໍ່ອາຊະຍາກຳທາງອິນເຕີເນັດ 8 ຄົນ ພ້ອມຂອງກາງ 200 ກວ່າເຄື່ອງ



ໃນວັນທີ 10 ພະຈິກ 2026, ເຈົ້າໜ້າທີ່ໜ່ວຍສະເພາະກິດ ກະຊວງປ້ອງກັນຄວາມສະຫງົບ ໄດ້ເຂົ້າມ້າງກຸ່ມກໍ່ອາຊະຍາກຳທາງອິນເຕີເນັດ ແລະ ການພະນັນອອນລາຍ ຢູ່ຈຸດບ້ານດົງໂພສີ ເມືອງຫາດຊາຍຟອງ, ບ້ານດອນນົກຂຸ້ມ ແລະ ບ້ານວັດນາກ ເມືອງສີສັດຕະນາກ ກັກຕົວຜູ້ຖືກຫາຄົນໄທ 6 ຄົນ ແລະ ຄົນຈີນ 2 ຄົນ.

ຈຸດທີ 1 ຢູ່ເຮືອນໃຫ້ເຊົ່າບ້ານດົງໂພສີ ກັກຕົວຜູ້ຖືກຫາສັນຊາດໄທ ຈຳນວນ 1 ຄົນ, ຍຶດໂທລະສັບມືຖືກ ຖື 10 ເຄື່ອງ, ໜ້າຈໍຄອມພິວເຕີຕັ້ງໂຕະ 19 ເຄື່ອງ.

ຈຸດທີ 2 ຢູ່ເຮືອນໃຫ້ເຊົ່າ ບ້ານດອນນົກຂຸ້ມ ກັກຕົວຜູ້ຖືກຫາສັນຊາດຈີນໄດ້ 2 ຄົນ, ຍຶດເຄື່ອງຂອງກາງ ມີໂທລະສັບມືຖື 176 ເຄື່ອງ.

ຈຸດທີ 3 ຢູ່ເຮືອນໃຫ້ເຊົ່າ ບ້ານວັດນາກ ກັກຕົວຜູ້ຖືກຫາເປັນຄົນສັນຊາດໄທ ໄດ້ 5 ຄົນ ຍິງ 1 ຄົນ, ຍຶດເຄື່ອງຂອງກາງ ມີໂທລະສັບມືຖື 25 ເຄື່ອງ, ຄອມພິວເຕີຕັ້ງໂຕະ 9 ເຄື່ອງ, ຄອມພິວເຕີໂນດບຸກ 1 ເຄື່ອງ, ຢາສູບໄຟຟ້າ 6 ອັນ ແລະ ໃບກະທອມ 1 ມັດ.

ຂ່າວ: ຄວາມສະຫງົບ

ຂ່າວພາຍໃນ · 09:17 ໂມງ · ອ່ານ 10 ຄັ້ງ

ແກ່ນທ້າວ ສະຫຼອງວັນຊົນລະປະທານ ພ້ອມເປີດຂະບວນການຜະລິດລະດູແລ້ງ



ເມືອງແກ່ນທ້າວ ແຂວງໄຊຍະບູລີ ໄດ້ຈັດພິທີສະເຫຼີມສະຫຼອງວັນຊົນລະປະທານແຫ່ງຊາດ (ວັນທີ 3 ພະຈິກ), ວັນສັກຢາກັນພະຍາດສັດ ແຫ່ງຊາດ (ວັນທີ 11 ພະຈິກ) ແລະ ວັນເປີດຂະບວນການຜະລິດລະດູແລ້ງ (ວັນທີ 15 ພະຈິກ) ປະຈຳປີ 2026, ໃນວັນທີ 11 ພະຈິກນີ້ ທີ່ ບ້ານນາບອນ ໂດຍມີທ່ານ ສີຄານ ແກ່ນມະນີ ປະທານຄະນະກຳມະການປົກຄອງເມືອງ, ມີຄະນະປະຈຳພັກເມືອງ, ມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມ

ກຳມະການພັກເມືອງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກົມກອງ, ອົງການຈັດຕັ້ງ, ລັດວິສາຫະກິດ, ດ່ານສາກົນ, ປະທານຄະນະກຳມະການປົກຄອງ 4 ຕາແສງ, ພະນັກງານ-ລັດຖະກອນ, ນັກທຸລະກິດ ຜູ້ປະກອບການ, ປະທານບ້ານ ພາຍໃນເຫດສະບານເມືອງ, ພ້ອມດ້ວຍ 15 ຕຳແໜ່ງງານ ຂອງບ້ານ ແລະ ປະຊາຊົນບ້ານນາບອນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ຈຳປາທອງ ສີມມາລີ ຮອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ໄດ້ຜ່ານບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຊົນລະປະທານ, ວຽກງານການສັກຢາກັນພະຍາດ ແລະ ວຽກງານສົ່ງເສີມການຜະລິດລະດູແລ້ງ ໃນ 1 ປີຜ່ານມາ ໃຫ້ຮູ້ວ່າ: ທົ່ວເມືອງມີຊົນລະປະທານທັງໝົດ 500 ແຫ່ງ (ໃນນີ້, ຝາຍຖາວອນ 17 ແຫ່ງ ແລະ ຝາຍຂອງປະຊາຊົນ 483 ແຫ່ງ), ສາມາດຫົດເນື້ອທີ່ນາໄດ້ 2,600 ກວ່າເຮັກຕາ (ເທົ່າກັບ 41.17%), ລະດູແລ້ງ 50 ເຮັກຕາ (ເທົ່າກັບ 0.78% ຂອງເນື້ອທີ່ນາທັງໝົດໃນທົ່ວເມືອງ); ໄດ້ສຳຫຼວດ ແລະ ສ້ອມແປງຈຸດທີ່ເປ່ເພ ໂຄງການອ່າງນ້ຳຕຳ, ໄດສູບນ້ຳ ຫາດແດງ, ນາທົ່ມ ແລະ ບ້ານແຄ ສຳເລັດ ມູນຄ່າ 1,424,000,000 ກວ່າກີບ.

ວຽກງານສັດຕະວະແພດ ທົ່ວເມືອງ ມີສັດລ້ຽງລວມທັງໝົດ 587,400 ກວ່າໂຕ (ປະກອບມີ: ງົວ, ຄວາຍ, ແບ້, ໝູ ແລະ ສັດລ້ຽງອື່ນໆ), ມີສັດຕະວະແພດ ບ້ານທັງໝົດ 50 ຄົນ (ຍິງ 1 ຄົນ) ປະຈຳຢູ່ 47 ບ້ານ. ໃນໄລຍະ 10 ເດືອນຜ່ານມາ, ສາມາດສັກຢາປ້ອງກັນພະຍາດສັດລ້ຽງໄດ້ທັງໝົດ 16,600 ກວ່າໂຕ (ເທົ່າກັບ 2.83% ຂອງຈຳນວນຝູງສັດ, ທຽບໃສ່ແຜນປະຕິບັດໄດ້ 3.24%).

ການຜະລິດລະດູແລ້ງ (ສົກປີ 2025-2026): ເຂົ້ານາແຊງ ແຜນການ 25 ເຮັກຕາ, ປະຕິບັດໄດ້ 14.23 ເຮັກຕາ (ເທົ່າກັບ 56.9%), ຜະລິດຕະພາບ 3.15 ໂຕນ/ເຮັກຕາ, ຜົນຜະລິດລວມ 45 ໂຕນ ແລະ ພືດລະດູແລ້ງ ແຜນການ 1,000 ເຮັກຕາ, ປະຕິບັດໄດ້ 900 ກວ່າເຮັກຕາ (ເທົ່າກັບ 91%), ຜົນຜະລິດລວມທັງໝົດ 6,800 ກວ່າໂຕນ.

ທ່ານ ສີຄານ ແກ່ນມະນີ ໄດ້ມີຄຳເຫັນໂອ້ລົມ ໂດຍໄດ້ເນັ້ນໜັກໃຫ້ສືບຕໍ່ສຸມໃສ່ຊຸກຍູ້ການຜະລິດກະສິກຳ ໃຫ້ມີທັງປະລິມານ ແລະ ຄຸນນະພາບ, ຊຸກຍູ້ການປຸງແຕ່ງ ເພີ່ມມູນຄ່າສິນຄ້າ ເພື່ອຕອບສະໜອງການບໍລິໂພກພາຍໃນ ແລະ ຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ. ເອົາໃຈໃສ່ນຳພາ-ຊີ້ນຳກຸ່ມຜູ້ໃຊ້ນ້ຳ ລົງສຳຫຼວດ ແລະ ສ້ອມແປງຈຸດເປ່ເພໃຫ້ທ່ວງທັນເວລາ, ອານາໄມຄອງເໝືອງ ແລະ ຄຸ້ມຄອງການແຈກຢາຍນ້ຳໃຫ້ທົ່ວເຖິງ. ສ່ວນເຂດນອກໂຄງການ ໃຫ້ຊ່ວຍກັນສ້າງຝາຍກັ້ນນ້ຳ ຫຼື ຄູກັ້ນນ້ຳຕາມທຳມະຊາດ ເພື່ອເກັບນ້ຳໄວ້ໃຊ້ໃນລະດູແລ້ງ, ສົ່ງເສີມການປຸກພືດລະດູແລ້ງ ບ່ອນທີ່ມີເງື່ອນໄຂ ເພື່ອຮັບປະກັນສະບຽງອາຫານ ແລະ ສິ່ງອອກຂາຍຕ່າງເມືອງ; ຊຸກຍູ້ການລ້ຽງສັດແບບເປັນຟາມ, ເປັນກຸ່ມ ແລະ ສະຫະກອນ. ພ້ອມທັງເອົາໃຈໃສ່ຕິດຕາມສຸຂະພາບສັດ, ປຸກຫຍ້າເປັນອາຫານສັດ, ອານາໄມຄອກ ແລະ ປະຕິບັດມາດຕະການແຍກປົ່ນປົວໃຫ້ທັນເວລາເມື່ອມີສັດເຈັບປ່ວຍ ເພື່ອສະກັດກັ້ນການລະບາດ.

ທີ່ມາຂ່າວ: ແກ່ນທ້າວ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 09:47 ໂມງ · ອ່ານ 9 ຄັ້ງ

ປະທານຄະນະກວດກາສູນກາງພັກ ຢ້ຽມຢາມ ບໍລິສັດ ຮ່ວມມືພັດທະນາບໍ່ແຮ່ ໄຊສົມບູນ



ທ່ານ ອັນໄຊ ພອງສະຫວັນ ກຳມະການກົມການເມືອງສູນກາງພັກ ປະທານຄະນະກວດກາສູນກາງພັກ, ປະທານອົງການກວດກາແຫ່ງລັດ, ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວລົງຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດ ຮ່ວມມືພັດທະນາບໍ່ແຮ່ ໄຊສົມບູນ ຈຳກັດ ຢູ່ເມືອງລ້ອງແຈ້ ໃນວັນທີ 10 ພະຈິກຜ່ານມາ ໂດຍມີ ທ່ານ ພອຍຄຳ ຮຸ່ງບຸນຍວງ ກຳມະການສູນກາງພັກ ເລຂາພັກແຂວງ ປະທານສະພາປະຊາຊົນ ແຂວງໄຊສົມບູນ ພ້ອມຄະນະຕິດຕາມນຳ

ທ່ານ ອັນດີ ກວາງວິໄວ ປະທານບໍລິສັດ ຮ່ວມມືພັດທະນາບໍ່ແຮ່ ໄຊສົມບູນ ຈຳກັດ ໄດ້ລາຍງານສະພາບລວມຂອງບໍລິສັດ, ການດຳເນີນງານ ຂະບວນການຜະລິດ, ລະບົບໂຮງງານ, ມາດຕະການຮັກສາຄວາມປອດໄພ, ມາດຕະການຮັກສາສິ່ງແວດລ້ອມ, ການພັດທະນາຊຸມຊົນ ແລະ ການສະໜັບສະໜຸນທ້ອງຖິ່ນ ພ້ອມທັງ ລາຍງານຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນຫາທີ່ຍັງຄ້າງຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານ ຂອງບໍລິສັດ ໃຫ້ຮັບຊາບ.

ໃນໂອກາດດັ່ງກ່າວ, ທ່ານ ອັນໄຊ ພອງສະຫວັນ ໄດ້ເນັ້ນໜັກໃຫ້ ບໍລິສັດ ສືບຕໍ່ເອົາໃຈໃສ່ການຈັດຕັ້ງປະຕິບັດວຽກງານດ້ວຍຄວາມຮັບຜິດຊອບສູງ ໂດຍຍົກສູງປະສິດທິພາບໃນການຄຸ້ມຄອງ ແລະ ບໍລິຫານການຜະລິດ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກຕ່າງໆ ໂດຍສະເພາະ ແມ່ນມາດຕະການຮັກສາສິ່ງແວດລ້ອມ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ທຳມະຊາດ, ນອກຈາກນີ້ ກໍໃຫ້ປະກອບສ່ວນພັດທະນາຊຸມຊົນ ແລະ ສະໜັບສະໜຸນທ້ອງຖິ່ນ ໂດຍການນຳໃຊ້ແຮງງານຄົນໃນພື້ນທີ່ ກໍຄືແຮງງານລາວ ເພື່ອສ້າງວຽກເຮັດງານທຳ ແລະ ສ້າງອາຊີບໃຫ້ແກ່ປະຊາຊົນ ພ້ອມທັງຊຸກຍູ້ ແລະ ສົ່ງເສີມປະຊາຊົນ ເຂດໃກ້ຄຽງ ໃຫ້ທຳການຜະລິດ ປູກຝັງ-ລ້ຽງສັດ ເຊັ່ນ: ລ້ຽງງົວ, ຄວາຍ, ໝູ, ໄກ່ ແລະ ປູກພືດຜັກຕ່າງໆ ເພື່ອສະໜອງໃຫ້ແກ່ບໍລິສັດ, ຫຼຸດຜ່ອນການຊື້ສະບຽງອາຫານຈາກແຫຼ່ງອື່ນ ເພື່ອເປັນການສ້າງລາຍຮັບໃຫ້ປະຊາຊົນໃນພື້ນທີ່, ສິ່ງສຳຄັນເປັນການປະກອບສ່ວນໃນການແກ້ໄຂຄວາມທຸກຍາກ, ຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ດີຂຶ້ນຢ່າງເປັນກ້າວໆ.

ທີ່ມາ: ໄຊສົມບູນ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 14:10 ໂມງ · ອ່ານ 2 ຄັ້ງ

ປກສ ເມືອງໂຂງ ຈັດພິທີທຳລາຍອາວຸດລ່າເນື້ອ ແລະ ວັດຖຸຕ້ອງຫ້າມ ຢູ່ຕາແສງດອນໂຂງ



ເມືອງໂຂງ ທຳລາຍອາວຸດລ່າເນື້ອກວ່າ 258 ກະບອກ ແລະ ໝໍ້ຊ໊ອດປາ 16 ເຄື່ອງ

ໃນວັນທີ 12 ພະຈິກ 2026, ຫ້ອງການຕາແສງດອນໂຂງ ເມືອງໂຂງ ແຂວງຈຳປາສັກ ໄດ້ຈັດພິທີທຳລາຍອາວຸດລ່າເນື້ອ ແລະ ວັດຖຸຕ້ອງຫ້າມ ໂດຍການເຂົ້າຮ່ວມຂອງ ທ່ານ ສາທິດ ປັດສາພັນ ເລຂາຄະນະບໍລິຫານງານພັກເມືອງໂຂງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງບ້ານອ້ອມຂ້າງ.

ທ່ານ ພັນໂທ ທອງຄູນ ໃສສະຫວັດ ຮອງຫົວໜ້າກອງບັນຊາການ ປກສ ເມືອງໂຂງ ໄດ້ລາຍງານໃຫ້ຮູ້ວ່າ ໃນປີ 2025-2026 ຜ່ານມາ, ເຈົ້າໜ້າທີ່ໄດ້ສຶມທົບກັບພາກສ່ວນກ່ຽວຂ້ອງ ເກັບກູ້ ແລະ ທ້ອນໂຮມອາວຸດທີ່ຜິດກົດໝາຍ ເພື່ອສະກັດກັ້ນບັນຫາປະກົດການຫຍໍ້ທໍ້ ແລະ ອາຊະຍາກຳໃນສັງຄົມ.

ລາຍການອາວຸດ ແລະ ວັດຖຸຕ້ອງຫ້າມທີ່ນຳມາທຳລາຍໃນຄັ້ງນີ້ ປະກອບມີ:

ອາວຸດລ່າເນື້ອ ລວມທັງໝົດ 258 ກະບອກ (ໄດ້ຈາກປະຊາຊົນສະໝັກໃຈມອບ 155 ກະບອກ, ຈາກການມ້າງຄະດີ 29 ກະບອກ ແລະ ອື່ນໆ) ເຊິ່ງປະກອບມີ:

ປືນແກັບ 157 ກະບອກ

ປືນອັດລົມດັດແປງ 28 ກະບອກ

ປືນດັດແປງຍິງລູກແອວ 4 ກະບອກ

ອຸປະກອນໝໍ້ຊ໊ອດປາ 16 ເຄື່ອງ

ການທຳລາຍອາວຸດຄັ້ງນີ້ ແມ່ນເພື່ອເປັນການບັງຄັບໃຊ້ກົດໝາຍຢ່າງເຂັ້ມງວດ ແລະ ຮັບປະກັນຄວາມສະຫງົບປອດໄພໃຫ້ແກ່ປະຊາຊົນໃນທ້ອງຖິ່ນ.

ຂ່າວ-ພາບ: ພຸດທະສິນ ວົງວິໄລ ທອງ

ຂ່າວພາຍໃນ · 13:12 ໂມງ · ອ່ານ 2 ຄັ້ງ

ຫສພ ດຳເນີນກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ຄັ້ງທີ VIII



ພາຍໃຕ້ການເປັນປະທານຂອງສະຫາຍ ເພັດ ພົມພັກ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຫ້ອງວ່າການສູນກາງພັກ, ໃຫ້ກຽດເຂົ້າຮ່ວມໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ສະຫາຍ ວິໄລ ຫລ້າຄຳຟອງ ກຳມະການກົມການເມືອງ ສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ມີບັນດາສະຫາຍ ການນຳ, ອະດີດການນຳຂັ້ນສູງ ແລະ ພະນັກງານອາວຸໂສ-ບຳນານ, ຜູ້ແທນສົມບຸນເຂົ້າຮ່ວມ 172 ສະຫາຍ, ຍິງ 67 ສະຫາຍ ທີ່ເປັນຕົວແທນໃຫ້ສະມາຊິກພັກ ທັງໝົດ 302 ສະຫາຍ.

ກອງປະຊຸມໃຫຍ່ຄັ້ງນີ້, ເປັນເຫດການສຳຄັນທາງການເມືອງ ຂອງອົງຄະນະພັກຫ້ອງວ່າການສູນກາງພັກ ທີ່ຈະໄດ້ຕີລາຄາຜົນງານ, ຂໍ້ຄົງຄ້າງ ແລະ ບົດຮຽນຈາກການນຳພາ-ຊີ້ນຳໃນໄລຍະ 5 ປີຜ່ານມາ; ກຳນົດທິດທາງ, ຄາດໝາຍ ແລະ ວຽກງານຈຸດສຸມໃນໄລຍະ 5 ປີຕໍ່ໜ້າ ໃຫ້ມີຄວາມສອດຄ່ອງກັບໜ້າທີ່ການເມືອງ ຂອງຫ້ອງວ່າການສູນກາງພັກ ໃນການເປັນ ເສນາທິການຊ່ວຍສູນກາງພັກໃຫ້ສາມາດ ນຳໄປຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນ ຈິງ.

ຂ່າວພາຍໃນ · 10:00 ໂມງ · ອ່ານ 2 ຄັ້ງ

ມອບ-ຮັບໂຄງການປັບປຸງສະໜາມກິລາເຈົ້າອະນຸວົງ



ໂອກາດນີ້, ທ່ານ ກົ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຂຶ້ນກ່າວຮັບໂຄງການ ໂດຍໄດ້ສະແດງຄວາມຂອບໃຈຕໍ່ລັດຖະບານຍີ່ປຸ່ນ ກໍຄືອົງການ JICA ທີ່ໃຫ້ການສະໜັບສະໜູນທຶນຊ່ວຍເຫລືອລ້າ ເພື່ອປັບປຸງສະໜາມ ກິລາແຫ່ງນີ້ໃຫ້ມີຄວາມທັນສະໄໝ ແລະ ສາມາດຮອງຮັບການຝຶກຊ້ອມ ແລະ ການແຂ່ງຂັນກິລາໃນລະດັບຕ່າງໆ, ພ້ອມທັງຢືນຢັນວ່າຈະເອົາໃຈໃສ່ຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ສະໜາມກິລາແຫ່ງນີ້ ໃຫ້ເກີດປະໂຫຍດສູງສຸດ, ມີປະສິດທິຜົນ ແລະ ມີຄວາມຍືນຍົງ. ພ້ອມນີ້, ສະໜາມກິລາເຈົ້າອະນຸວົງ ຍັງຈະເປັນພື້ນຖານສຳຄັນໃນການພັດທະນານັກກິລາລາວ ໃຫ້ມີຄວາມສາມາດສູງຂຶ້ນ, ຍົກລະດັບມາດຕະຖານການຝຶກຊ້ອມ ແລະ ການແຂ່ງຂັນ ເພື່ອກຽມພ້ອມຮອງຮັບການຈັດງານກິລາລະດັບພາກພື້ນ ແລະ ສາກົນໃນອະນາຄົດ ໂດຍສະເພາະການກະກຽມເປັນເຈົ້າພາບຈັດການແຂ່ງຂັນກິລາຊີເກມ ຄັ້ງທີ 36 ແລະ ອາຊຽນພາຣາເກມ ຄັ້ງທີ 16 ທີ່ ສປປ ລາວ ຈະເປັນເຈົ້າພາບໃນປີ 2031.

ທ່ານ ສີຈັນ ຈິດຕະປັນຍາຫົວໜ້າກົມກິລາລະດັບສູງ ກະຊວງສຶກສາທິການ ແລະ ກິລາ ໄດ້ໃຫ້ຮູ້ວ່າ: ໂຄງການປັບປຸງສະໜາມກິລາເຈົ້າອະນຸວົງ, ໄດ້ຮັບທຶນຊ່ວຍເຫລືອລ້າຈາກລັດຖະບານຍີ່ປຸ່ນ ຜ່ານອົງການ JICA ລວມມູນຄ່າໂຄງການທັງໝົດ 4.171 ລ້ານເຢນ ຫລື ປະມານ 27,50 ລ້ານໂດລາສະຫະລັດ. ການປັບປຸງສ້ອມແປງສະໜາມກິລາແຫ່ງນີ້, ໄດ້ປັບປຸງລູ່ແລ່ນ- ລານ ແລະ ສະໜາມບານເຕະ ດ້ວຍຫຍ້າທຳມະຊາດຂະໜາດ 105x68 ແມັດ, ພ້ອມລະບົບລະບາຍນ້ຳ, ບ່ອນນັ່ງຊົມ ສາມາດ ບັນຈຸໄດ້ 4.300 ຄົນ. ນອກຈາກນີ້, ຍັງມີສິ່ງອຳນວຍຄວາມສະດວກຕ່າງໆ ເປັນຕົ້ນ ຫ້ອງປະຊຸມ, ຫ້ອງສື່ມວນຊົນ, ຫ້ອງນ້ຳ, ຫ້ອງອາຫານທີ່ຮັບໄດ້ 100 ຄົນ, ຫ້ອງອອກກຳລັງກາຍ, ຫ້ອງເກັບມ້ຽນອຸປະກອນ, ຫ້ອງປ່ຽນເຄື່ອງ, ຫ້ອງແພດ ແລະ ຫ້ອງຝຶກຊ້ອມ. ພ້ອມກັນນັ້ນ, ຍັງໄດ້ຕິດຕັ້ງລະບົບໄຟສ່ອງສະຫວ່າງລະດັບສູງ, ປ້າຍໄຟ LED ສຳລັບສະແດງ

ຕໍ່ໜ້າ 7

ມອບ-ຮັບໂຄງການປັບປຸງສະໜາມກິລາເຈົ້າອະນຸວົງ ... (ຕໍ່ຈາກໜ້າ 6)

ຄະແນນ ແລະ ລະບົບເຕືອນໄຟ ພ້ອມອຸປະກອນໄຟຟ້າອື່ນໆຢ່າງຄົບຖ້ວນ. ຈຸດເດັ່ນທີ່ສຳຄັນທີ່ສຸດຂອງການປັບປຸງຄັ້ງນີ້ ແມ່ນການອອກແບບໃຫ້ເປັນສະໜາມກິລາແບບລວມສູນແຫ່ງທຳອິດຂອງລາວທີ່ສາມາດຮອງຮັບໄດ້ນັກກິລາທົ່ວໄປ ແລະ ນັກກິລາຄົນພິການ ໄດ້ຢ່າງສະດວກ ແລະ ສາມາດເຂົ້າເຖິງໄດ້ຢ່າງເທົ່າທຽມກັນ ປະກອບມີລະບົບລິຟ ສຳລັບລໍ້ເລື່ອນຄົນພິການ ແລະ ບ່ອນນັ່ງສຳລັບຄົນພິການ.

ຜົນສຳເລັດຂອງໂຄງການນີ້, ມີຄວາມໝາຍສຳຄັນຫລາຍຕໍ່ ສປປ ລາວ ທາງດ້ານກິລາ ແລະ ການພັດທະນາຊັບພະຍາກອນມະນຸດ, ສະໜາມກິລາແຫ່ງນີ້ ຈະເປັນສູນກາງການຝຶກຊ້ອມ ແລະ ການແຂ່ງຂັນຂອງນັກກິລາທີມຊາດລາວ ແລະ ນັກກິລາອຸ່ນຕ່າງໆ, ຄາດຄະເນຜູ້ໃຊ້ບໍລິການຈະເພີ່ມຂຶ້ນຈາກ 100.000 ຄົນຕໍ່ປີ ເປັນ 140.000 ຄົນຕໍ່ປີ. ພ້ອມນີ້, ຍັງມີແຜນຈະບັນຈຸເອົາສະໜາມກິລາເຈົ້າອະນຸວົງ ເປັນໜຶ່ງໃນສະໜາມຫລັກສຳລັບ ການເປັນເຈົ້າພາບຈັດການແຂ່ງຂັນກິລາຊີເກມ ຄັ້ງທີ 36 ແລະ ອາຊຽນພາຣາເກມ ຄັ້ງທີ 16 ທີ ສປປ ລາວ ຈະເປັນເຈົ້າພາບໃນປີ 2031.

ຂ່າວ: ທະນູມອງ; ພາບ: ເກດສະໜາ

ເສດຖະກິດ-ສັງຄົມ

ເສດຖະກິດ-ສັງຄົມ · 14:19 ໂມງ · ອ່ານ 6 ຄັ້ງ

ຊາວກະສິກອນ ເມືອງພຽງສືບຕໍ່ເກັບກູ້ຜົນຜະລິດເຂົ້ານາປີ ໃນປີ 2026 ໄດ້ແລ້ວກວ່າ 70% ຄາດຜົນຜະລິດລວມກວ່າ 20.130 ໂຕນ.



ອີງຕາມບົດລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງໜ່ວຍງານປູກຝັງ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງພຽງ ແຂວງໄຊຍະບູລີ ປະຈຳເດືອນພະຈິກ 2026 ລະບຸວ່າ: ການຜະລິດກະສິກຳປະຈຳປີ 2026 ມີຜົນຄືບໜ້າເປັນຢ່າງດີ ໂດຍສະເພາະການເກັບກູ້ເຂົ້ານາປີ ທີ່ສາມາດດຳເນີນໄປແລ້ວກວ່າ 70% ຂອງເນື້ອທີ່ປູກຕົວຈິງ ແລະ ຄາດຄະເນວ່າຈະໄດ້ຜົນຜະລິດລວມກວ່າ 20.130 ໂຕນ.

ສຳລັບເນື້ອທີ່ປູກເຂົ້າທົ່ວເມືອງພຽງໃນປີນີ້ ມີທັງໝົດກວ່າ 7.400 ເຮັກຕາ ຈາກແຜນການກວ່າ 7.480 ເຮັກຕາ. ໃນນັ້ນ ເນື້ອທີ່ນາປີປະຕິບັດໄດ້ກວ່າ 6.900 ເຮັກຕາ ປະກອບມີນາດຳທົ່ວໄປກວ່າ 2.950 ເຮັກຕາ ແລະ ນາກະເສດສຸມກວ່າ 3.940 ເຮັກຕາ ໂດຍແບ່ງເປັນນາຫວ່ານກວ່າ 2.300 ເຮັກຕາ ແລະ ນາຢອດກວ່າ 1.640 ເຮັກຕາ.

ມາຮອດເດືອນພະຈິກ ຊາວກະສິກອນສາມາດເກັບກູ້ເຂົ້ານາປີໄດ້ແລ້ວກວ່າ 3.790 ເຮັກຕາ ຫຼື ກວ່າ 70% ຂອງເນື້ອທີ່ປູກຕົວຈິງ ຄາດຄະເນຜົນຜະລິດລວມປະມານ 20.130 ໂຕນ. ສ່ວນການຜະລິດແນວພັນເຂົ້າຢູ່ສູນຂອງບໍລິສັດ ອາຊີ-ໂປດາສ ສາກົນ ເນື້ອທີ່ 15 ເຮັກຕາ ເກັບກູ້ໄດ້ແລ້ວ 3 ເຮັກຕາ ຫຼື 20% ຂອງເນື້ອທີ່. ຂະນະທີ່ເຂົ້າໄຮ່ເນື້ອທີ່ກວ່າ 480 ເຮັກຕາ ໄດ້ເກັບກູ້ສຳເລັດ 100% ແລ້ວ ໄດ້ຜົນຜະລິດກວ່າ 1.240 ໂຕນ ສະມັດຕະພາບສະເລ່ຍ 2,6 ໂຕນຕໍ່ເຮັກຕາ.

ນອກຈາກນີ້ ວິຊາການກະສິກຳຍັງໄດ້ລົງຕິດຕາມ ແລະ ແກ້ໄຂບັນຫາພະຍາດໃບໄໝ້ຂອງເຂົ້າຢູ່ບ້ານນ້ຳປັ່ງ ເຊິ່ງພົບວ່າມີເນື້ອທີ່ລະບາດທັງໝົດ 7,40 ເຮັກຕາ ແລະ ມີເນື້ອທີ່ເສຍຫາຍຕົວຈິງ 3,72 ເຮັກຕາ.

ຂະນະດຽວກັນ ການປູກພືດລະດູຝົນປະຈຳປີ 2026 ກໍມີຜົນງານເກີນແຜນການ ໂດຍທົ່ວເມືອງສາມາດປູກພືດຊະນິດຕ່າງໆໄດ້ກວ່າ 19.600 ເຮັກຕາ ລື່ນແຜນການ 6,99% ຈາກແຜນທີ່ກຳນົດໄວ້ 18.230 ເຮັກຕາ. ປັດຈຸບັນເກັບກູ້ຜົນຜະລິດໄດ້ແລ້ວກວ່າ 4.850 ເຮັກຕາ ຫຼື 24,75% ຂອງເນື້ອທີ່ປູກທັງໝົດ.

ໃນດ້ານພືດສະບຽງອາຫານ ມີເນື້ອທີ່ປູກຕົວຈິງ 609,10 ເຮັກຕາ ລື່ນແຜນການ 19,43% ແລະ ເກັບກູ້ໄດ້ແລ້ວ 555,60 ເຮັກຕາ ຫຼື 91,22% ຄາດຄະເນຜົນຜະລິດ 3.117,35 ໂຕນ. ພືດທີ່ປູກປະກອບມີ ສາລີຫວານ, ໝາກແຕງ, ໝາກເຜັດ, ໝາກເຂືອ, ຜັກບົ່ວ, ຜັກທຽມ ແລະ ພືດຜັກອື່ນໆ.

ສ່ວນພືດເປັນສິນຄ້າ ມີເນື້ອທີ່ປູກ 18.991,83 ເຮັກຕາ ລື່ນແຜນການ 6,17% ເກັບກູ້ແລ້ວ 4.295,46 ເຮັກຕາ ຫຼື 22,62% ແລະ ຄາດຄະເນຜົນຜະລິດ 43.514,58 ໂຕນ. ໃນນັ້ນ ພືດຫຼັກທີ່ເກັບກູ້ແລ້ວມີ ສາລີແຂງ 2.772,50 ເຮັກຕາ, ໝາກງາ 617,69 ເຮັກຕາ, ໝາກເດືອຍ 166,42 ເຮັກຕາ, ມັນຕົ້ນ 56,55 ເຮັກຕາ ແລະ ພືດອື່ນໆອີກ 682,29 ເຮັກຕາ.

ສຳລັບໄມ້ໃຫ້ໝາກ ມີເນື້ອທີ່ໃຫ້ຜົນຜະລິດ 250 ເຮັກຕາ ເກັບກູ້ສຳເລັດ 100% ໄດ້ຜົນຜະລິດລວມ 3.220 ໂຕນ ພ້ອມທັງປູກໃໝ່ເພີ່ມອີກ 155,41 ເຮັກຕາ ລື່ນແຜນການ 3,61%.

ທັງນີ້ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງພຽງ ຈະສືບຕໍ່ລົງຕິດຕາມ ແລະ ຊຸກຍູ້ຊາວກະສິກອນໃຫ້ເລັ່ງເກັບກູ້ຜົນຜະລິດເຂົ້ານາປີ ແລະ ພືດລະດູຝົນທີ່ຍັງເຫຼືອໃຫ້ທັນຕາມກຳນົດເວລາ ພ້ອມກະກຽມເນື້ອທີ່ສຳລັບການຜະລິດເຂົ້ານາແຊງ ແລະ ພືດລະດູແລ້ງໃນຕໍ່ໜ້າ.

ທີ່ມາ: ຂ່າວສານເມືองพຽง

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

◆ ເສດຖະກິດ-ສັງຄົມ · 13:32 ໂມງ · ອ່ານ 2 ຄັ້ງ

ໂຄງການໄຟຟ້າ 500 kV ລາວ-ຈີນຍົກລະດັບຄວາມໝັ້ນຄົງດ้านพะลังงาน



ท่าน สุลิวัน ทำมะวิง ຮองผู้อำนวยการบริษัท สายส่งไฟฟ้าแห่งชาติลาว จำกัด (EDL-T) ให้สำพาดในวันที่ 10 พฤศจิกา 2026 นี้ว่า: โครงการเชื่อมจอดตาข่างไฟฟ้า 500 kV ลาว-จีน เป็นข้อต่อกะดูกสันหลังทำอิด ที่ปูพื้นถานใช้ สปป ลาว ก้าวสู่การเป็นสูนกางพะลังงานสะอาดของพากพื้น และเป็นการหันป่ายนแหล่งพะลังงานสะอาดสิยวย ให้กายเป็นทึนธอนเพื่อสร้างพะลังยับเถื่อนใหม่ให้แก่เสดถะกิดแห่งชาด ไปพ้อมกับการเติบโตแบบยืนยิงของพากพื้น.

ในไลยะผ่านมา สปป ลาว มีท่าแธงผะลิดไฟฟ้าจากพะลังงานน้ำตกย่างมะหาสาน แต่ยังผะเชิญข้อจำกัดด้านละบบสายส่งไฟฟ้า เธัดใช้บางไลยะมีไฟฟ้าเกือใช้ในละดูฝน (ในละดูฝนสามาดผะลิดไฟฟ้าได้เกินถามต้องการ แต่ต้องป่อยถิ้มกายเถิง 800 ล้านกิโลวัดโมง เนื่องจากบ่มีช่องทางส่งออก), แต่กับขาดแถนในละดูแล้ง. การมีละบบสายส่ง 500 kV จึงเป็นกันไกสำคันในการแก้ไขบันหาดังกล่าว ซึ่งนับแต่อันที่ 20 เมสา 2026 เป็นต้นมา โครงการดังกล่าวสามาดยกระดับขีดถามสามาดการส่งไฟฟ้าจาก 50 MW เป็น 1.500 MW หรือ เพิ่มขึ้น 30 เท่า และ เปิดโอกาดส่งออกพะลังงานสะอาดได้สูงสุด 3 ตื้กิโลวัดโมงต่อปี. จุดเด่นของโครงการแม่นการสร้างละบบซื้-ขายไฟฟ้าสองทิดทาง โดยในละดูฝนสามาดส่งออกไฟฟ้าส่วนเกิน เพื่อสร้างลายธับเงินตา. ละนะที่ในละดูแล้ง กำสามาดนำเข้าไฟฟ้าจาก สป จีน มาช่วยเสิมถามต้องการพายใน เพื่อธับปะกันการสะหงองไฟฟ้าให้แก่ปะชาชิน, โธงงาน, โธงหมี และ โธงธงน.

ท่าน สุลิวัน ทำมะวิง ยังได้ยิกให้เห็นติอเลกการส่งออก และ ลายธับติอจิง ซึ่งปะกอบมีปะลิมานไฟฟ้าจากเคื่อนน้ำอู 5, 6 และ 7 ปะมาน 600 ล้าน kWh ถืกส่งโดยกิงไปเขดอ่าอใหย่ของจีน ลวมมีกวางตุ้ง, ธิงกิง และ มาเก๊า; พะลังงานแสงตาเอ้น คาดว่าจะส่งออกข้ามแดนได้เถิง 1,1 ตื้ kWh ต่ปี. นอกนั้น, ยังมีโครงการโซลาฟามเทิงพู อิก 1.000 MW ที่กำลังกะกงมพัดทะนา.

ด้านการพัดทะนาชับพะยากอนมะนุด, EDL-T ได้ธ่วมกับ EDL ดำเนินโครงการฝึกอิบธึมช่างฝีมือด้านสายส่ง และ แปงไฟฟ้า ลาว-จีน ผ่านมาแล้ว 7 ชุด, มีผู้ผ่านการฝึกอิบธึม 84 คิน. นอกนั้น, ยังมีการจัดฝึกอิบธึมด้านการบริหาน, การบำลุงธักสา และ เต็กโนโลชิโดธน หลายกว่า 80 ถั้ง, มีผู้เข้าธ่วมหลายกว่า 2.000 เที่อคิน, พ้อมนี้ยังได้นำใช้ธูบแบบฝึกอิบธึมวิสะอะกอนหมุ่มแบบ 2+2+2 ซึ่งปะกอบมีการธงนพาสาจีน 2 เดือน, ธงนทิดสะดี และ ปะติบัด 2 เดือน และ ลิงหน้าองการติอจิงอิก 2 เดือน สามาดพัดทะนาพะนักงานชั้กแหล่งด้านเต็กนิกท้องถิ่นได้ 171 คิน. ละนะที่ในไลยะปี 2010-2026 กำได้มอบทึนการสึกสาให้นักสึกสาลาวไปสึกสาต่ยุ่ประเทดจีน 81 คิน. ในนั้น, จิบการสึกสาแล้ว 53 คิน.

ส่วนด้านการปึกปักธักสาสิ่งแอดล้อม โครงการได้ใช้ถอามสำคันต่การหุดผ่อนผินกะทิบต่ป่าไม้ และ ซุมชิน โดยการปับแลอสายส่ง และ นำใช้เต็กนิกยกเสาสูง เพื่อหุดการตัดไม้, สามาดธักสาเนื้อที่ป่าไม้ได้ 170,4 เธ้กตา และ หุดถอามกว้างของแลอตัดไม้จาก 70 แม้ด เหลือปะมาน 22 แม้ด พ้อมทั้งดำเนินการนกอดกู้ลูกละเบิดบ่ทันแตก (UXO) ตามแนวสายส่ง เพื่อธับปะกันถอามปอดไพในการก่สร้าง และ ซุมชินท้องถิ่น. พ้อมกันนั้น, โครงการยังได้สร้างอูการเธ้ดงานทำให้แก่แธงงานท้องถิ่น, ปับปุงโธงธงน, สร้างห้องอ่าน และ มอบทึนการสึกสาให้นักธงน-นักสึกสาลาว ซึ่งสะท้อนให้เห็นเถิงถอามธับผิดชอบต่สังคิมของโครงการ.

สำลับทิดทางในต่หน้า EDL-T จะสืบต่ธ่วมมือกับพากส่วนที่ก่ยวอ้อง เพื่อพัดทะนาตาข่างไฟฟ้าหลักให้เชื่อมจอดท้อปะเทด, ส่งเสิมการปะสานพะลังงานน้ำตก, แสงตาเอ้น และ ลม, พัดทะบาละบบการค้าไฟฟ้ากับปะเทดในพากพื้น และ สร้างบุกถะลากอนอิสะอะกอนลาวให้มีถอามช่ำนานสูงขึ้น.

ท่าน สุลิวัน ทำมะวิง ยังได้ยืนยันว่า: โครงการไฟฟ้า 500 kV ลาว-จีน บ่แม่นพงแต่โครงการสายส่งไฟฟ้าข้ามแดน แต่เป็นพื้นถานสำคันในการสร้างถอามหมั้นถึงด้านพะลังงาน, สร้างมูนถ่าทางเสดถะกิด, ยกระดับทักสะของคินลาว และ ส่งเสิมการธ่วมมือ ลาว-จีน ให้เติบโตย่างยืนยิง. โครงการนี้, เป็นหลายกว่าสายส่งไฟฟ้า แต่เป็นอือเชื่อมต่พะลังงาน, เต็กโนโลชิ, ถอามรู้ และ โอกาดการพัดทะนาละหว่าง ลาว-จีน เพื่อก้าวไปสู่อะนาถิดพะลังงานที่หมั้นถึง และ ยืนยิง.

ข่าว-พาบ: ทะนุทอง

โถสะบา

ลิ้งโถสะบา ใน ມะหาสาน ลายวัน

ໜังสือพิม PDF ปะจำวัน · จองเป็นลายวัน, ลายอาทิด หรือ ลายเดือน · ทิมงานออกแบบให้ฟรี

WhatsApp 020 5888 6182

ຂ່າວຕ່າງປະເທດ · 13:59 ໂມງ · ອ່ານ 23 ຄັ້ງ

ຈາກເຮືອໂດຍສານລະດັບຕຳນານ ສູ່ບ້ານໃໝ່ໃຕ້ມະຫາສະໝຸດ! ເຮືອ SS United States ອຳລາຜືອນ້ຳ ກຽມເປັນແຫຼ່ງປະການ້ຳທຽມໃຫຍ່ທີ່ສຸດໃນໂລກ



ເຮືອ SS United States ເຮືອໂດຍສານປະຫວັດສາດທີ່ເຄີຍຄອງສະຖິຕິເປັນເຮືອໂດຍສານທີ່ແລ່ນໄວທີ່ສຸດໃນໂລກ ກຳລັງຈະປົດຕຳນານລົງ ຫຼັງມີແຜນນຳເຮືອລຳນີ້ຈົມລົງສູ່ພື້ນທະເລນອກແຄມຝັ່ງລັດຟລໍຣິດາ ປະເທດສະຫະລັດ ເພື່ອປ່ຽນເປັນແຫຼ່ງປະການ້ຳທຽມທີ່ໃຫຍ່ທີ່ສຸດໃນໂລກ ພ້ອມເປັນແຫຼ່ງອາໄສຂອງສັດທະເລ ແລະສະຖານທີ່ທ່ອງທ່ຽວດຳນ້ຳແຫ່ງໃໝ່.

ເຮືອ SS United States ມີຄວາມຍາວຫຼາຍກວ່າເຮືອ Titanic ແລະເຄີຍເປັນໜຶ່ງໃນເຮືອໂດຍສານທີ່ມີຊື່ສຽງທີ່ສຸດໃນໂລກ. ເຮືອລຳນີ້ຈອດຢູ່ທີ່ເມືອງຟີລາເດວເຟຍ (Philadelphia) ເປັນເວລາເກືອບ 30 ປີ ກ່ອນຈະຖືກຍ້າຍມາຍັງລັດຟລໍຣິດາ ຫຼັງຈາກອົງການປົກຄອງທ້ອງຖິ່ນໃນລັດດັ່ງກ່າວໄດ້ຈັດຊື້ເຮືອລຳນີ້ເພື່ອນຳມາຈົມເປັນແຫລ່ງປະການ້ຳທຽມ.

ການຈົມເຮືອມີກຳນົດດຳເນີນໃນວັນພຸດ ໂດຍໃຊ້ວິທີຄວບຄຸມການຈົມຢ່າງແມ່ນຍຳ ແລະ ບໍ່ໃຊ້ວັດຖຸລະເບີດ.

ໃນອະດີດ ເຮືອ SS United States ເລີ່ມໃຫ້ບໍລິການຂ້າມມະຫາສະໝຸດແອັດແລນຕິກໃນປີ 1952 ແລະຢຸດໃຫ້ບໍລິການໃນປີ 1969. ຕະຫຼອດໄລຍະການໃຫ້ບໍລິການ ເຮືອລຳນີ້ເຄີຍຕ້ອນຮັບບຸກຄົນສຳຄັນ ແລະ ບັນດາຄົນດັງລະດັບໂລກຈຳນວນຫຼາຍ ລວມທັງອະດີດປະທານາທິບໍດີສະຫະລັດ ແຣຣີ ທຣູແມນ, ດະໄວທ໌ ໄອເຊນຮາວເວີ ແລະ ຈອນ ເອັຟ ເຄນເນດີ.

ນອກນັ້ນ ອະດີດປະທານາທິບໍດີ ບິວ ຄລິນຕັນ ກໍເຄີຍໂດຍສານເຮືອລຳນີ້ຂ້າມມະຫາສະໝຸດແອັດແລນຕິກໃນສະໄໝທີ່ຍັງເປັນໄວລຸ້ນ. ສ່ວນຄົນດັງອື່ນໆ ທີ່ເຄີຍໂດຍສານເຮືອລຳນີ້ ມີທັງ ມາລອນ ແບຣນໂດ, ໂຄໂຄ ຊາແນລ, ດຸກ ເອລລິງຕັນ, ຊັນອາດໍ ດາລີ, ອອລຕ໌ ດິສນີ, ຈູດີ ກາແລນ ແລະ ແຄຣີ ແກຣນ.

ກ່ອນໜ້ານີ້ ເຄີຍມີຄວາມພະຍາຍາມຜັກດັນໃຫ້ອະນຸລັກເຮືອ SS United States ໄວ້ ໂດຍສະເໜີໃຫ້ປັບປຸງເປັນພິພິທະພັນ ຫຼືໂຮງແຮມລອຍນ້ຳ ແຕ່ຂໍ້ສະເໜີຕ່າງໆບໍ່ປະສົບຜົນສຳເລັດ.

ດ້ານກຸ່ມ SS United States Conservancy ເຊິ່ງເປັນອົງການທີ່ພະຍາຍາມອະນຸລັກເຮືອປະຫວັດສາດລຳນີ້ ໄດ້ຕໍ່ສູ້ເພື່ອຮັກສາເຮືອໃຫ້ຄົງຢູ່ເໜືອຜືວນ້ຳ ມາໂດຍຕະຫຼອດ ແຕ່ສຸດທ້າຍກໍບໍ່ສາມາດປ່ຽນແປງແຜນການໄດ້.

ນາງ ຊູຊານ ກິບສ໌ (Susan Gibbs) ປະທານກຸ່ມ SS United States Conservancy ເຊິ່ງພໍ່ຕູ້ຂອງນາງເປັນໜຶ່ງໃນຜູ້ອອກແບບເຮືອລຳນີ້ ກ່າວວ່າ ນາງຮູ້ສຶກດີໃຈທີ່ເລື່ອງລາວ ແລະ ຄວາມຊົງຈຳຂອງເຮືອລຳນີ້ຈະຍັງຄົງສືບຕໍ່ໄປ. ນາງມອງວ່າ ເຮືອລຳນີ້ເປັນສັນຍະລັກແຫ່ງຄວາມພາກພູມໃຈຂອງຊາວອາເມລິກາ ທີ່ສາມາດເຊື່ອມໂຍງຜູ້ຄົນຈຳນວນຫຼາຍເຂົ້າດ້ວຍກັນ.


ທັງນີ້ ກ່ອນຈະເດີນທາງສູ່ຊາຍຝັ່ງເມືອງເດສຕິນ (Destin) ລັດຟລໍຣິດາ ເຮືອ SS United States ໄດ້ຖືກຍ້າຍຈາກເມືອງຟີລາເດວເຟຍໄປຍັງລັດແອລາບາມາໃນປີກາຍນີ້ ເພື່ອດຳເນີນການອະນາໄມ ແລະປັບປຸງສະພາບເຮືອ ກ່ອນຈະອອກເດີນທາງສູ່ຈຸດໝາຍປາຍທາງຄັ້ງສຸດທ້າຍ ຄືພື້ນຟຸທະເລ.

ທີ່ມາຂ່າວ: BBC

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

ຂ່າວຕ່າງປະເທດ · 10:09 ໂມງ · ອ່ານ 13 ຄັ້ງ

ເກີດເຫດບໍ່ຄາດຄິດ! ອາຄານ 3 ຊັ້ນແຫ່ງໜຶ່ງໃນນະຄອນນິວຢອກໄດ້ພັງຖະຫຼົ່ມລົງ ມີຜູ້ເສຍຊີວິດ ແລ້ວຢ່າງໜ້ອຍ 2 ຄົນ ແລະ ຜູ້ບາດເຈັບ 17 ຄົນ.



ຕາມລາຍງານຂອງສຳນັກຂ່າວ Associated Press (AP) ແລະຂໍ້ມູນຈາກເຈົ້າໜ້າທີ່ ລະບຸວ່າ ເຫດອາຄານອະເນກປະສົງ 3 ຊັ້ນພັງຖະຫຼົ່ມໃນເຂດບຣຸກລິນ (Brooklyn) ນະຄອນນິວຢອກ ເມື່ອເວລາ 16:00 ໂມງ ຂອງວັນທີ 11 ພະຈິກ 2026 ຕາມເວລາທ້ອງຖິ່ນ ສົ່ງຜົນໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 2 ຄົນ ແລະມີຜູ້ບາດເຈັບ 17 ຄົນ ໃນນັ້ນ 4 ຄົນມີອາການສາຫັດ ເຊິ່ງເວລາດັ່ງກ່າວກົງກັບ 04:00 ໂມງ ຂອງວັນທີ 12 ພະຈິກ ຕາມເວລາລາວ.

ນັກດັບເພີງເລັ່ງຄົ້ນຫາຜູ້ລອດຊີວິດ ຫຼັງອາຄານ 3 ຊັ້ນ ໃນນິວຢອກພັງຖະຫຼົ່ມ ເສຍຊີວິດ 2 ຄົນ ບາດເຈັບ 17 ຄົນ (ພາບຈາກ: AP)

ເຈົ້າໜ້າທີ່ກູ້ໄພແລະນັກດັບເພີງລະດົມກຳລັງຄົ້ນຫາຜູ້ປະສົບໄພທີ່ອາດຍັງຕິດຄ້າງຢູ່ໃຕ້ຊາກອາຄານ 3 ຊັ້ນ ໃນເຂດບຣຸກລິນ (Brooklyn) ນະຄອນນິວຢອກ ສະຫະລັດ ຫຼັງອາຄານດັ່ງກ່າວພັງຖະຫຼົ່ມລົງໃກ້ກັບພື້ນທີ່ກໍ່ສ້າງ ໃນຕອນບ່າຍວັນພຸດ ວັນທີ 11 ພະຈິກ 2026 ເຮັດໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 2 ຄົນ ແລະບາດເຈັບອີກ 17 ຄົນ.

ຫຼັງເກີດເຫດ ນັກດັບເພີງແລະຕຳຫຼວດຫຼາຍສິບຄົນໄດ້ເຂົ້າປະຕິບັດການຄົ້ນຫາຢ່າງເຕັມກຳລັງ ໂດຍນຳໃຊ້ຈອບແລະເລື່ອຍໄຟຟ້າ ເພື່ອເປີດທາງຜ່ານຊາກອາຄານ ແລະຊ່ວຍນຳຜູ້ປະສົບໄພທີ່ຖືກເສດໄມ້ແລະດິນຈີ່ທັບຖົມອອກມາ. ການຄົ້ນຫາດຳເນີນໄປຫຼາຍຊົ່ວໂມງ ທ່າມກາງຊາກອາຄານທີ່ພັງທອງທັບຖົມກັນ.

ລາຍງານລະບຸວ່າ ມີຜູ້ບາດເຈັບຢ່າງໜ້ອຍ 17 ຄົນຖືກນຳສົ່ງໂຮງໝໍ ໃນນັ້ນມີ 4 ຄົນຢູ່ໃນອາການສາຫັດ. ຂະນະທີ່ກົມດັບເພີງນະຄອນນິວຢອກ (FDNY) ລະບຸວ່າ ຈະສືບຕໍ່ການຄົ້ນຫາແລະກູ້ໄພໄປຈົນເຖິງຕອນກາງຄືນ ເນື່ອງຈາກຍັງບໍ່ສາມາດຢືນຢັນໄດ້ວ່າມີຜູ້ຄົນຕິດຄ້າງຢູ່ໃຕ້ຊາກອາຄານອີກຫຼືບໍ່.

ທ່ານ ໂຊຣານ ມໍາດານີ (Zohran Mamdani) ນາຍົກເທດສະມົນຕີນະຄອນນິວຢອກ ກ່າວວ່າ ສະຖານະການໃນຈຸດເກີດເຫດມີຄວາມສັບສົນແລະທ້າທາຍຢ່າງຫຼາຍ ເນື່ອງຈາກຊາກອາຄານບາງສ່ວນຍັງບໍ່ໝັ້ນຄົງ ແລະມີຊ່ອງວ່າງທີ່ອາດເປັນອັນຕະລາຍຢູ່ພາຍໃຕ້ຊາກຫັກພັງ. ທ່ານລະບຸວ່າ ການກູ້ໄພລັກສະນະນີ້ເປັນວຽກງານທີ່ FDNY ໄດ້ຝຶກຊ້ອມແລະກຽມພ້ອມມາໂດຍສະເພາະ.

ດ້ານສາເຫດຂອງອາຄານພັງຖະຫຼົ່ມ ທາງການຍັງຢູ່ໃນຂັ້ນຕອນການສືບສວນ. ທ່ານ ອາເໝັດ ຕິການີ (Ahmed Tigani) ກຳມະການກົມຄວບຄຸມອາຄານນະຄອນນິວຢອກ ເປີດເຜີຍວ່າ ໃນຂະນະທີ່ອາຄານພັງລົງ ມີຄົນງານກໍ່ສ້າງກຳລັງຂຸດດິນຢູ່ໃນດິນຕອນຫວ່າງທີ່ຢູ່ຕິດກັນ ເພື່ອກະກຽມກໍ່ສ້າງອາຄານຫຼັງໃໝ່.

ສຳລັບອາຄານທີ່ພັງຖະຫຼົ່ມເປັນອາຄານອະເນກປະສົງ ມີຫ້ອງພັກອາພາດເມັນຢູ່ຊັ້ນເທິງ ແລະຮ້ານຄ້າຢູ່ຊັ້ນລຸ່ມ ໂດຍຊາກອາຄານສ່ວນໃຫຍ່ໄດ້ພັງລົງໄປກອງຢູ່ພາຍໃນຂຸມກໍ່ສ້າງທີ່ຢູ່ຕິດກັນ. ສ່ວນອາຄານຂ້າງຄຽງທີ່ມີຝາຮ່ວມກັນຍັງຄົງຕັ້ງຢູ່ໄດ້ ແຕ່ຝາດ້ານທີ່ຕິດກັບອາຄານທີ່ພັງໄດ້ເສຍຫາຍຈົນເປີດໃຫ້ເຫັນພາຍໃນຫ້ອງລວມທັງຫ້ອງນອນແລະຕູ້ເສື້ອຜ້າ.

ໃນເວລາປະມານ 18:30 ໂມງ ຕາມໂມງທ້ອງຖິ່ນ ນັກດັບເພີງສາມາດຊ່ວຍແມ່ຍິງຄົນໜຶ່ງອອກມາຈາກຊ່ອງວ່າງທີ່ຂຸດຜ່ານກອງຊາກອາຄານ ໂດຍນາງຍັງມີຊີວິດແລະສາມາດເຄື່ອນໄຫວໄດ້. ຈາກນັ້ນ ເຈົ້າໜ້າທີ່ໄດ້ນຳນາງຂຶ້ນເປລ ແລະຮີບນຳສົ່ງໄປຍັງລົດສຸກເສີນທີ່ລໍຖ້າຢູ່.

ຕໍ່ມາ ເຈົ້າໜ້າທີ່ຍັງສາມາດຊ່ວຍຜູ້ປະສົບໄພຄົນອື່ນໆອອກຈາກໃຕ້ຊາກອາຄານໄດ້ອີກ. ທາງການລະບຸວ່າ ໃນຈຳນວນຜູ້ປະສົບໄພມີເດັກນ້ອຍ 7 ຄົນ ແຕ່ຍັງບໍ່ໄດ້ລະບຸວ່າມີເດັກນ້ອຍຢູ່ໃນກຸ່ມຜູ້ເສຍຊີວິດຫຼືບໍ່.

ໃນການຄົ້ນຫາ ທີມກູ້ໄພໄດ້ນຳໃຊ້ໂດຣນເພື່ອສຳຫຼວດພື້ນທີ່ຈາກທາງອາກາດ ພ້ອມທັງໃຊ້ສຸນັກກູ້ໄພຊ່ວຍດົມກິ່ນຄົ້ນຫາຜູ້ລອດຊີວິດ. ເມື່ອຟ້າມືດລົງ ນັກດັບເພີງຕ້ອງໃຊ້ໄຟສາຍສ່ອງສະຫວ່າງໃນການປະຕິບັດງານ.

ທ່ານ ລິລຽນ ບອນຊິນຍໍ (Lillian Bonsignore) ຫົວໜ້າກົມດັບເພີງນະຄອນນິວຢອກ ກ່າວວ່າ ການກູ້ໄພຄັ້ງນີ້ເປັນວຽກງານທີ່ສ່ຽງອັນຕະລາຍສູງ ແລະທຸກຂັ້ນຕອນຕ້ອງມີການວາງແຜນປະສານງານກັນຢ່າງລະອຽດ. ຂະນະທີ່ທາງການລະບຸວ່າ ມີນັກດັບເພີງ 1 ຄົນໄດ້ຮັບບາດເຈັບເລັກນ້ອຍຈາກເຫດການນີ້.

ດ້ານທ່ານ ແອນເດີສັນ ເວເລຊ (Anderson Velez) ຜູ້ອາໄສຢູ່ໃນອາຄານທີ່ພັງຖະຫຼົ່ມ ໃຫ້ສຳພາດກັບໜັງສືພິມ New York Post ວ່າ ໃນຂະນະທີ່ລາວກຳລັງເຮັດວຽກ ພັນລະຍາໄດ້ໂທມາແຈ້ງວ່າ ນາງແລະລູກສອງຄົນ ອາຍຸ 7 ປີ ແລະ 2 ປີ ຕິດຢູ່ໃຕ້ຊາກອາຄານ.

ລາວເລົ່າວ່າ ພັນລະຍາໄດ້ໂທຫາລາວໃນຂະນະທີ່ອາຄານກຳລັງພັງຖະຫຼົ່ມ ໂດຍຕອນນັ້ນນາງຢູ່ພາຍໃນອາຄານ ແລະມີຊາກຫັກພັງທັບຢູ່ເທິງຕົວ. ນາງໄດ້ຮ້ອງຂໍຄວາມຊ່ວຍເຫຼືອ ພ້ອມທັງຮ້ອງບອກໃຫ້ຄົນຊ່ວຍນຳລູກຊາຍອອກມາ ກ່ອນທີ່ສາຍໂທຈະຖືກຕັດຂາດ.

ແນວໃດກໍຕາມ ຕໍ່ມາທ່ານ ເວເລຊ ໄດ້ຮັບຂ່າວດີວ່າ ພັນລະຍາແລະລູກທັງສອງຄົນຂອງລາວ ສາມາດລອດຊີວິດ ແລະໄດ້ຮັບການຊ່ວຍເຫຼືອອອກມາຈາກຊາກອາຄານແລ້ວ.

ທີ່ມາ: Associated Press (AP)

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວຕ່າງປະເທດ · 11:01 ໂມງ · ອ່ານ 12 ຄັ້ງ

ຈັບສິລະປິນລາວຄາຄອນເສີດ! ບໍ່ມີໃບອະນຸຍາດເຮັດວຽກໃຊ້ ວີຊາທ່ອງທ່ຽວຜິດວັດຖຸປະສົງ.



ວັນທີ 11 ພະຈິກ 2026, ພັນຕຳຫຼວດເອກ ນັດ ກະຕິດ ມີສຸກ ຜູ້ອຳນວຍການຕຳຫຼວດກວດຄົນເຂົ້າເມືອງ ແຂວງປະທຸມທານີ, ພັນຕຳຫຼວດໂທ ພິລະພັດ ຮອງຜູ້ອຳນວຍການພ້ອມດ້ວຍເຈົ້າໜ້າທີ່ຊຸດສືບສວນປາບປາມ ຕມ.ຈວ.ປະທຸມທານີ ໄດ້ເຂົ້າກວດກາການສະແດງຄອນເສີດຂອງສິລະປິນຕ່າງດ້າວສັນຊາດລາວ ໃນງານເທດສະການອາຫານແຊບ ບາລຸນແຟນຕາຊີ ບໍລິເວນລານຈອດລົດກິນຊ່າ ຣັງສິດ ອຳເພີທັນຍະບຸຣີ ແຂວງປຸທຸມທານີ.

ຫຼັງໄດ້ຮັບແຈ້ງເບາะແສວ່າ ຈະມີສິລະປິນຊາຍສັນຊາດລາວ ເດີນທາງເຂົ້າມາໃນປະເທດໄທດ້ວຍວີຊາທ່ອງທ່ຽວ ແລະ ບໍ່ມີໃບອະນຸຍາດເຮັດວຽກ ມາທຳການສະແດງຮ້ອງເພງໃນຄອນເສີດ ອີກທັງມີຕາຕະລາງງານສະແດງໃນປະເທດໄທແທບທຸກມື້ ຄືອຍາວຮອດສິ້ນປີ ໂດຍຈາກການຫາຂໍ້ມູນຊາບວ່າ ສິລະປິນຄົນດັ່ງກ່າວຈະມາທຳການສະແດງທີ່ຕະຫຼາດກິນຊ່າ ພື້ນທີ່ແຂວງປຸທຸມທານີ ຈຶ່ງໄດ້ວາງແຜນເຂົ້າກວດກາ.

ຈົນກະທັ່ງພົບຊາຍສັນຊາດລາວ ມີລັກສະນະລາຍຕາມເບາะແສທີ່ໄດ້ຮັບ ປະກົດຕົວຂຶ້ນສະແດງທົ່ງເວທີແທ້ ຊາບຊື່ ແມ່ນ MR.JIM (ນາມສົມມຸດ) ອາຍຸ 30 ປີ ສັນຊາດລາວ ຫຼັງການສະແດງ ຈຶ່ງໄດ້ເຂົ້າກວດກາໜັງສືຜ່ານແດນ (ພາສປອດ) ດ້ານຫຼັງເວທີ ພົບການກວດກາ ປະກົດວ່າ MR.JIM ບໍ່ມີໃບອະນຸຍາດເຮັດວຽກ ແລະ ເດີນທາງເຂົ້າມາໃນປະເທດໄທດ້ວຍວີຊາທ່ອງທ່ຽວ ເຊິ່ງເປັນການໃຊ້ວີຊາຜິດວັດຖຸປະສົງ ໂດຍເຈົ້າຕົວໃຫ້ການຮັບສາລະພາບຕະຫຼອດຂໍ້ກ່າວຫາ ແລະ ໃຫ້ການເພີ່ມເຕີມວ່າ ຕົນໄດ້ຮັບເງິນຄ່າຈ້າງໃນການສະແດງລະຄັ້ງ 15,000 ບາດ.

ເຈົ້າໜ້າທີ່ຈຶ່ງແຈ້ງຂໍ້ກ່າວຫາ “ເປັນບຸກຄົນຕ່າງດ້າວເຮັດວຽກໂດຍບໍ່ມີໃບອະນຸຍາດເຮັດວຽກ” ຕາມມາດຕາ 8 ເຊິ່ງມີບົດກຳນົດໂທດຕາມມາດຕາ 101 ພ.ຣ.ກ. ການບໍລິຫານຈັດການການເຮັດວຽກຂອງຄົນຕ່າງດ້າວ ພ.ສ. 2560 ແລະ ທີ່ແກ້ໄຂເພີ່ມເຕີມ (ສະບັບທີ 2) ພ.ສ. 2561 ກ່ອນນຳຕົວສົ່ງ ສະຖານີຕຳຫຼວດພູທອນ ເພື່ອດຳເນີນຄະດີຕາມກົດໝາຍຕໍ່ໄປ.

ທີ່ມາ: khaosod

ຂ່າວຕ່າງປະເທດ · 15:10 ໂມງ · ອ່ານ 8 ຄັ້ງ

ອິສຣາເອນໂຈມຕີໂຮງໝໍນັດເຊີໃນກາຊາ ເສຍຊີວິດຢ່າງໜ້ອຍ 6 ຄົນ ບາດເຈັບ 20 ຄົນ



ກອງທັບອິສຣາເອນຍິງລູກສອນໄຟໂຈມຕີອາຄານແຜນກສັນຍາຄຳ ແລະ ຫ້ອງໄອຊີ ຂອງໂຮງໝໍນັດເຊີ ໃນເມືອງຢຸນິສ ທາງຕອນໃຕ້ຂອງເຂດສະນອນກາຊາ ເມື່ອຊ່ວງເຊົ້າມືດວັນພະຫັດ ສົ່ງຜົນໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 6 ລາຍ ລວມທັງສັນຍາແພດ 1 ນາຍ ແລະ ມີຜູ້ໄດ້ຮັບບາດເຈັບອີກ 20 ຄົນ ດ້ານກຸ່ມຣາມາສປະນາມເປັນອາຊະຍາກຳສົງຄາມເຕັມຮູບແບບ ທ່າມກາງສະຖານະການຢຸດຍິງທີ່ເປຣາะບາງ ແລະ ວິກິດນ້ຳທ້ອມຄ້າຍຜູ້ພົ້ນຫຼັດຖິ່ນ.

ຊາວປາເລສຕິນເສຍຊີວິດຢ່າງໜ້ອຍ 6 ຄົນ ແລະ ໄດ້ຮັບບາດເຈັບອີກ 20 ຄົນ ຫຼັງອິສຣາເອນໂຈມຕີທາງອາກາດໃສ່ອາຄານພາຍໃນໂຮງໝໍນັດເຊີ ໃນເມືອງຂານຢຸນິສ ທາງຕອນໃຕ້ຂອງເຂດສນອນກາຊາ ເມື່ອຊ່ວງເຊົ້າມືດວັນທີ 12 ພະຈິກ ຕາມຂໍ້ມູນຈາກເຈົ້າໜ້າທີ່ໜ່ວຍປ້ອງກັນໄພພົນລະເຮືອນກາຊາ ເຊິ່ງຢູ່ພາຍໃຕ້ການບໍລິຫານຂອງກຸ່ມຣາມາສ.

ສຳນັກຂ່າວຣອຍເຕີຣ໌ລາຍງານໂດຍອ້າງຄຳໃຫ້ສໍາພາດ ໂຄສົກໜ່ວຍປ້ອງກັນໄພພົນລະເຮືອນກາຊາວ່າ ມີຜູ້ເສຍຊີວິດ 6 ຄົນ ລວມທັງສັນຍາແພດໜຶ່ງນາຍ ຂະນະທີ່ກ່ອນໜ້ານີ້ ມາຮ໌ມຸດ ບາຊານ ໂຄສົກໜ່ວຍງານດັ່ງກ່າວໃຫ້ຂໍ້ມູນກັບສຳນັກຂ່າວເອແອັບພີວ່າ ມີຜູ້ເສຍຊີວິດ 6 ຄົນເຊັ່ນກັນ.

ພະຍານໃນພື້ນທີ່ລະບຸວ່າ ລູກສອນໄຟພຽງລູກດຽວຈາກເຄື່ອງບິນຮົບທີ່ບິນຜ່ານບໍລິເວນດັ່ງກ່າວໃນຊ່ວງສັ້ນໆ ພຸ່ງເຂົ້າໃສ່ອາຄານເຊິ່ງເປັນທີ່ຕັ້ງຂອງແຜນກສັນຍາ ແລະ ຫໍຜູ້ປ່ວຍໜັກຂອງໂຮງໝໍ ສົ່ງຜົນໃຫ້ມີຜູ້ບາດເຈັບ 20 ຄົນ.

ເຈົ້າໜ້າທີ່ທາງການແພດລະບຸຊື່ສັນຍາແພດທີ່ເສຍຊີວິດວ່າ ເຮຊິກ ອາບຸ ຊີຮາ ຂະນະທີ່ຜູ້ນຳອຳນວຍການສູນການແພດນັດເຊີເປີດເຜີຍກັບຜູ້ສື່ຂ່າວວ່າ ອາຄານຖືກໂຈມຕີໃນແນວດິ່ງ ເຮັດໃຫ້ແຜນກຜູ້ປ່ວຍໜັກ ແລະ ແຜນກສັນຍາ ຄຳທັງຊາຍ ແລະ ຍິງ ໄດ້ຮັບຄວາມເສຍຫາຍຢ່າງໜັກ.

ພາບວິດີໂອທີ່ນັກເຄື່ອນໄຫວເຜີຍແຜ່ສະແດງໃຫ້ເຫັນກຸ່ມຄວັນໜາທຶບພາຍໃນອາຄານ ແລະ ຄວາມເສຍຫາຍຢ່າງກວ້າງຂວາງບໍລິເວນຊັ້ນສອງ ເຊິ່ງມີອຸປະກອນທາງການແພດ ແລະ ຕຽງຜູ້ປ່ວຍກະຈັດກະຈາຍຈາກແຮງລະເບີດ.

